## ຖ້າຂ້ອຍບໍ່ມີເງິນພໍທີ່ຈະໃຫ້ລູກຮັບການສັກຢາປ້ອງກັນໄດ້ ຈະເຮັດແນວໃດ?

ທັມມະດາໃນເມື່ອຄອບຄົວໃດບໍ່ສາມາດຈ່າຍຄ່າໄດ້, ຈະບໍ່ເກັບຄ່າສັກຢາເດັກ. ໃຫ້ໂທ 800-232-2522 ຫລືກົມສາທາຣະນະສຸກປະຈຳທ້ອງຖິ່ນຫລືປະຈຳຣັດຂອງທ່ານເພື່ອສອບຖາມວ່າບ່ອນສັກຢາປ້ອງກັນທີ່ບໍ່ເກັບຄ່າຫລືເກັບຄ່າໜ້ອຍຢູ່ໃສ. ຖ້າທ່ານສົນໃຈສຸຂະພາບລູກຂອງທ່ານ, ທ່ານກໍຈຳເປັນຕ້ອງໃຫ້ລູກໄດ້ຮັບການສັກຢາປ້ອງກັນດັ່ງກ່າວ!

## ຄຳແນະນຳສຳລັບພວກພໍ່ແມ່!

ພວກຜູ້ໃຫຍ່ຄວນໄດ້ຮັບການສັກຢາປ້ອງກັນຄືກັນ! ໃຫ້ໄທຫາຄລີນິກຫລືກົມສາທາຣະນະສຸກຂອງທ່ານເພື່ອຮູ້ຈັກວ່າທ່ານຕ້ອງສັກຢາປ້ອງກັນແນວໃດ ແລະຕ້ອງສັກຢາເມື່ອໃດ. ລູກຂອງທ່ານກຳລັງໄວ້ໃຈວ່າທ່ານຈະຢູ່ກັບເຂົາຍືນຍາວນານ.

**ເດັກທຸກຄົນທີ່ມີອາຍຸຕັ້ງແຕ່ເກີດເຖິງ 18 ປີຕ້ອງສັກຢາປ້ອງກັນໂລກຕັບ B!**




**ແມ່ທຸກຄົນຕ້ອງສັກຢາປ້ອງກັນພະຍາດ!**

ຖ້າຫາກທ່ານຈ່າຍຄ່າສັກຢາປ້ອງກັນບໍ່ໄດ້ຫລືບໍ່ຮູ້ຈັກຈະໄປໃສເພື່ອສັກຢາປ້ອງກັນ ໃຫ້ຕິດຕໍ່ກັບສາທາຣະນະສຸກເມືອງ, ເຄົານ໌ຕີ້, ຫລືຣັດຂອງທ່ານ ຫລືໂທ 800-232-2522.



Immunization Action Coalition
1573 Selby Avenue, Suite 234
St. Paul, MN 55104
651-647-9009
www.immunize.org
www.vaccineinformation.org

ຂໍ້ຄວາມໃນໃບປິວສະບັບນີ້ໄດ້ທົບທວນເພື່ອຄວາມຖືກຕ້ອງໂດຍສູນກາງການຄວບຄຸມແລະປ້ອງກັນພະຍາດ (Centers for Disease Control and Prevention). ບໍ່ໄດ້ສງວນລິກຂະສິດ. ທ່ານໃດຕ້ອງການຈະຄັດແປງໃໝ່ຕາມຄວາມເໝາະສົມເພື່ອໃຊ້ກັບຄລີນິກຫລືຊຸມຊົນຂອງທ່ານ, ກໍເຊີນເຮັດໄດ້. ຢ່າງໃດກໍດີ, ກະລຸນາພິມຄຳຂອບໃຈໄວ້ໃສ່ເພື່ອແຈ້ງຜູ້ອ່ານວ່າໄດ້ຄັດແປງມາຈາກໃບປິວຂອງກຸ່ມຮ່ວມດຳເນີນການສັກຢາປ້ອງກັນພະຍາດ (Immunization Action Coalition).

www.immunize.org/catg.d/4055la.pdf
Item #P4055-04 Laotian (4/98, reviewed 8/04)

# ເດັກທຸກໆຄົນຕ້ອງການສັກຢາປ້ອງກັນໂລກຕັບ B!



ເດັກນ້ອຍ



ເດັກໃຫຍ່ປານກາງ



ແລະເດັກໃຫຍ່ອີກນຳ!

## ໂລກຕັບ B ແມ່ນຫຍັງ?

ໂລກຕັບ B ເປັນພະຍາດຕັບທີ່ຮ້າຍແຮງຊຶ່ງເກີດຈາກເຊື້ອໄວຣັສ. ເຊື້ອໄວຣັສນີ້ສາມາດເຂົ້າໄປຢູ່ໃນເລືອດ, ເຮັດໃຫ້ຕັບອັກເສບ, ແລະເກີດການເຈັບປ່ວຍໜັກ. ໃນບາງກໍຣະນີເຊື້ອໄວຣັສຈະຢູ່ໃນຮ່າງກາຍຕໍ່ໄປຕລອດຊີວິດແລະຄ່ອຍທຳລາຍຕັບ.

## ພວກເດັກແລະເດັກວັຍລຸ່ນຕິດໂລກຕັບ B ໄດ້ໂດຍວິທີໃດ?

ລືມີຫລາຍວິທີ. ໂລກຕັບ B ສາມາດແຜ່ເຊື້ອໂດຍວິທີ:

- ການຖືກເລືອດຫລືຂອງແຫລວຈາກຕົວຂອງຄົນທີ່ຕິດໂລກຕັບ B
- ການໃຊ້ແປງຖູແຂ້ວ, ມີດແຖໜວດ, ຜ້າລ້າງໜ້າ, ຫລືເຂັມສັກຢາຮ່ວມກັນກັບຜູ້ທີ່ຕິດໂລກຕັບ B
- ການຖືກຄົນອື່ນກັດ
- ການຮ່ວມເພດກັບຄົນທີ່ຕິດໂລກຕັບ B
- ການບ່ອງຫູ, ເຈາະຮູໃສ່ຮາງກາຍຫລືການສັກລາຍໂດຍໃຊ້ເຄື່ອງບໍ່ສະອາດ




## ເປັນຫຍັງລູກທຸກຄົນຂອງຂ້ອຍຕ້ອງສັກຢາປ້ອງກັນໂລກຕັບ B?

ພວກພະຍາບານທຸກໆພວກທົ່ວສະຫະຣັດຕົກລົງກັນວ່າເດັກທຸກໆຄົນຕັ້ງແຕ່ເກີດເຖິງອາຍຸ 18 ປີຕ້ອງການສັກຢາປ້ອງກັນໂລກຕັບ B ເພື່ອຈະປອດພັຍຈາກພະຍາດນີ້ໄດ້.
ດຽວນີ້ເດັກເກີດໃໝ່ທຸກຄົນຄວນສັກຢາປ້ອງກັນໂລກຕັບ B ພ້ອມດ້ວຍການສັກຢາປ້ອງກັນພະຍາດອື່ນໆ. ຖ້າຫາກວ່າເດັກຫລືເດັກວັຍລຸ່ນຂອງທ່ານບໍ່ໄດ້ສັກຢາປ້ອງກັນໂລກຕັບ B ຕອນເກີດໃໝ່ ຈົ່ງສັກເຂົາເຈົ້າດຽວນີ້.

## ລູກຂອງຂ້ອຍສ່ຽງຕໍ່ການຕິດເຊື້ອໄວຣັສຕັບ B ຫລາຍກວ່າເດັກທົ່ວໄປບໍ?

ບຸກຄົນໃດສາມາດຕິດໂລກຕັບ B ໄດ້. ຢ່າງໃດກໍດີ, ເດັກທີ່ໄດ້ເກີດຢູ່ນອກສະຫະຣັດຫລືພໍ່ແມ່ຂອງເຂົາໄດ້ເກີດຢູ່ນອກສະຫະຣັດໃນທ້ອງຖິ່ນທີ່ມີການຕິດໂລກຕັບ B ຫລາຍກໍອາດຈະສ່ຽງທີ່ຈະຕິດໂລກຕັບ B ຫລາຍກວ່າຄົນທົ່ວໄປໄດ້.

ບາງບ່ອນທີ່ມີການຕິດໂລກຕັບ B ເປັນບັນຫາໃຫຍ່ ຄືເອເຊັຍ, ອາຟຣິກາ, ເກາະປາຊີຟິກ, ຢູໂຣບທິດຕະເວັນອອກ, ອາຄິດໂຊວຽດ ແລະອາເມຣິກາໃຕ້.

ຖ້າທ່ານບໍ່ແນ່ໃຈວ່າ ຢູ່ປະເທດກຳເນີດຂອງທ່ານມີການຕິດໂລກຕັບ B ຫລາຍປານໃດ, ໃຫ້ຖາມທ່ານໝໍຫລືກົມສາທາລະນະສຸກຂອງທ່ານ.
ບາງທີທ່ານໝໍຂອງທ່ານຈະເຫັນສົມຄວນກວດລູກຂອງທ່ານເພື່ອແນ່ໃຈວ່າເຂົາບໍ່ໄດ້ຕິດເຊື້ອໄວຣັສໂລກຕັບ B ມາແລ້ວ, ກ່ອນທີ່ທ່ານໝໍຈະຕັ້ງຕົ້ນສັກຢາປ້ອງກັນໂລກຕັບ B ເທື່ອທຳອິດ.




## ຂ້ອຍຄວນອະນຸຍາດໃຫ້ລູກຮັບການສັກຢາປ້ອງກັນພະຍາດຢູ່ທີ່ໂຮງຮຽນຫລືບໍ່?

ມີເດັກຫລາຍຄົນກຳລັງໄດ້ຮັບການສັກຢາປ້ອງກັນໂລກຕັບ B ຢູ່ທີ່ໂຮງຮຽນ. ຖ້າລູກຂອງທ່ານມີໂອກາດຮັບການສັກຢາປ້ອງກັນຢູ່ທີ່ໂຮງຮຽນ, ກໍຈະເປັນທາງທີ່ດີເພື່ອທ່ານແລະ/ຫລືລູກຂອງທ່ານຈະບໍ່ຕ້ອງທຽວໄປສັກຢາທີ່ຫ້ອງການຂອງທ່ານໝໍອີກສາມເທື່ອ!

## ຢາປ້ອງການນີ້ປອດພັຍຫລາຍປານໃດ?




ຢາສັກປ້ອງກັນໂລກຕັບ B ປອດພັຍກວ່າຢາສັກປ້ອງກັນໂລກອື່ນໆເກືອບທຸກຊະນິດ. ຢານີ້ໄດ້ໃຊ້ໃນສະຫະຣັດມາຕັ້ງແຕ່ປີ 1981 ແລະໄດ້ສະແດງວ່າປອດພັຍແລະເກີດຜົນ.